ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມທາງນໍ້າ

ເລກທີ: 05455 /ຍທຂ.ກທນ

ນະຄອນຫຼວງວຽງຈັນ,ວັນທີ: 6. 3. 2020

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ
## ທີ່ປຶກສາ ສໍາຫຼວດ-ອອກແບບ ແລະ ຄຸມງານກໍ່ສ້າງ
## ໂຄງການກໍ່ສ້າງປ້ອງກັນຕະຝັ່ງ ບ້ານດອນປາແດກ ເມືອງໜອງບົກ ແຂວງຄໍາມ່ວນ

1. ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບອະນຸມັດງົບປະມານແຫ່ງລັດປະຈໍາປີ 2020 ເພື່ອດໍາເນີນການສໍາຫຼວດ-ອອກແບບ ແລະ ຄຸມງານກໍ່ສ້າງ ສໍາລັບໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນບ້ານດອນປາແດກ ເມືອງຫນອງບົກ ແຂວງຄໍາມ່ວນ ດ້ວຍການດໍາເນີນການປະມູນເປີດກວ້າງບໍລິສັດພາຍໃນຂອງລາວ.
2. ກົມທາງນໍ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດພາຍໃນຂອງລາວທີ່ສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການສໍາຫຼວດ-ອອກແບບ ແລະ ຄຸມງານກໍ່ສ້າງ ໂຄງການກໍ່ສ້າງປ້ອງກັນຕະຝັ່ງບ້ານດອນປາແດກ, ໄລຍະການສໍາຫຼວດ-ອອກແບບ ກໍານົດ 1 ເດືອນ ແລະ ຄຸມງານກໍ່ສ້າງ ກໍານົດ 18 ເດືອນ ນັບແຕ່ ປີ 2020-2022.
3. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກໍານົດໄວ້ຢູ່ໃນດໍາລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ-ສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ແລະ ລະບຽບການຈັດຕັ້ງປະຕິບັດດໍາລັດ, ສະບັບເລກທີ 0063/ກງ, ລົງວັນທີ 12ມີນາ 2004.
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບວຽກທີ່ຈະດໍາເນີນການສໍາຫຼວດ-ອອກແບບ ແລະ ຄຸມງານກໍ່ສ້າງ ສໍາລັບການກໍ່ສ້າງຂົວທາງ, ຊົນລະປະທານ ແລະ ທາງນໍ້າ (ປະຕັງຂັ້ນ1) ຢູ່ໃນຂອບເຂດທົ່ວປະເທດ.
5. ບໍລິສັດທີ່ສົນໃຈເຂົ້າຮ່ວມປະມູນ ໃຫ້ມາລົງທະບຽນ ແລະ ຊື້ເອກະສານເຂົ້າຮ່ວມການປະມູນ ຢູ່ກົມທາງນໍ້າ, ພະແນກ ແຜນການ-ງົບປະມານ (ຊັ້ນ 2); ເລີ່ມແຕ່ວັນທີ 11 ມີນາ 2020 ເປັນຕົ້ນໄປ, ລາຄາລົງທະບຽນ 500.000 ກີບ, ຈານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.

6. ກໍານົດສົ່ງຊອງປະມູນ ວັນທີ 20 ມີນາ 2020, ສະຖານທີ່ ຫ້ອງປະຊຸມ (ຊັ້ນທີ2) ກົມທາງນໍ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ ໃນເວລາ ຫລືກ່ອນເວລາ 13:30ໂມງ ຂອງວັນທີ 20 ມີນາ 2020 ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 20 ມີນາ 2020. ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.
7. ບໍລິສັດທີ່ມີຄວາມສົນໃຈ ສາມາດສອບຖາມຂໍ້ມູນເພີ່ມເຕີມ ຫຼື ພົວພັນໄດ້ທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ, ກົມທາງນໍ້າ, ພະແນກ ປ້ອງກັນຜົນກະທົບຕໍ່ຕະຝັ່ງ, ໂທລະສັບ: 021 452423 ໃນໂມງລັດຖະການ.

ຫົວໜ້າກົມ

ຮຸງຫຼ້າ ແສງເມືອງ